ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
**ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ**

ເລກທີ 613 /ກຄສບ
ນະຄອນຫລວງວຽງຈັນ, ວັນທີ 11 ຕຸລາ 2023

**ແຈ້ງການ**

**ເຖິງ:** ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ທີ່ນັບຖື,
**ເລື່ອງ:** ການນໍາໃຊ້ໂປຣແກຣມບັນຊີຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ສະເໜີຂໍສ້າງຕັ້ງໃໝ່.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 47/ສພຊ ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ດໍາລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 224/ນຍ, ລົງວັນທີ 19 ກໍລະກົດ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 975/ທຫລ, ລົງວັນທີ 07 ທັນວາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການບັນຊີຂອງ ທະນາຄານທຸລະກິດ ແລະ ສະຖາບັນການເງິນ ສະບັບເລກທີ 397/ທຫລ, ລົງວັນທີ 27 ພຶດສະພາ 2022;
- ອີງຕາມ ຄໍາແນະນໍາກ່ຽວກັບຮູບແບບຂໍ້ມູນ ແລະ ການລາຍງານຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 119/ກຄສງ, ລົງວັນທີ 12 ມີນາ 2021;
- ອີງຕາມ ຄໍາແນະນໍາກ່ຽວກັບຂັ້ນຕອນ ແລະ ເງື່ອນໄຂໃນການອອກອະນຸຍາດດໍາເນີນທຸລະກິດສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສະບັບເລກທີ 26/ກຄສງ ລົງວັນທີ 31 ມີນາ 2020.

ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ (ກຄສບ) ຂໍຖືເປັນກຽດແຈ້ງມາຍັງທ່ານ ທີ່ມີຈຸດປະສົງຈະສ້າງຕັ້ງສະຖາບັນການເງິນທີ່ບໍ່ແມ່ນທະນາຄານຄື: ❶ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ❷ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ❸ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ, ❹ ບໍລິສັດເຊົ່າສິນເຊື່ອ ແລະ ❺ ໂຮງຊວດຈໍາ, ຕ້ອງໄດ້ປະຕິບັດຕາມເງື່ອນໄຂ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍສະເພາະຕ້ອງມີໂປຣແກຣມບັນຊີ ເພື່ອຊ່ວຍໃນການບັນທຶກເກັບກໍາຂໍ້ມູນ ແລະ ສະຫຼຸບຜົນການເຄື່ອນໄຫວ ເພື່ອສ້າງເອກະສານລາຍງານການເງິນ ແລະ ລາຍງານອື່ນໆທີ່ກ່ຽວຂ້ອງ. ຊຶ່ງໂປຣແກຣມບັນຊີທີ່ຈະນໍາໃຊ້ຕ້ອງມີເງື່ອນໄຂພື້ນຖານດັ່ງນີ້:

1. ສາມາດຮອງຮັບຜັງບັນຊີສະຖາບັນການເງິນ ແລະ ປະຕິບັດຕາມຫຼັກການບັນຊີສະຖາບັນການເງິນ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

2. ສາມາດສ້າງບົດລາຍງານທີ່ເປັນຮູບແບບເອເລັກໂຕຣນິກ (XML File ຫຼື JSON File) ພ້ອມທັງຮູບແບບເອກະສານ (PDF 12 ແບບຟອມ) ໂດຍອັດຕະໂນມັດ ເພື່ອລາຍງານໃຫ້ກັບ ກຄສບ ຫຼື ສາຂາ ທະນາຄານແຫ່ງ ສປປ ລາວ;
3. ສາມາດສ້າງເອກະສານລາຍງານການເງິນໂດຍອັດຕະໂນມັດ ເພື່ອລາຍງານໃຫ້ກັບ ກົມບັນຊີ ແລະ ການເງິນ ທະນາຄານແຫ່ງ ສປປ ລາວ;
4. ສາມາດສ້າງບົດລາຍງານຂໍ້ມູນຂ່າວສານສິນເຊື່ອໂດຍອັດຕະໂນມັດ ເພື່ອລາຍງານໃຫ້ກັບ ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ.

ໃນກໍລະນີຜູ້ຂໍສ້າງຕັ້ງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີເປົ້າໝາຍຈະນໍາໃຊ້ໂປຣແກຣມບັນຊີໃດໜຶ່ງທີ່ຍັງບໍ່ຮອງຮັບເງື່ອນໄຂທີ່ກ່າວມາຂ້າງເທິງ ຫຼື ມີຈຸດປະສົງຈະພັດທະນາໂປຣແກຣມບັນຊີ ເພື່ອມາຮັບໃຊ້ເຂົ້າໃນວຽກງານຂອງຕົນເອງ ຈະຕ້ອງໄດ້ໃຫ້ຜູ້ພັດທະນາໂປຣແກຣມບັນຊີ ເຂົ້າມາພົວພັນເຮັດວຽກກັບ ກຄສບ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຄໍາແນະນໍາທາງດ້ານເຕັກນິກໃນການພັດທະນາການລາຍງານໄປຕາມຮູບແບບ ແລະ ໂຄງສ້າງຂໍ້ມູນທີ່ກໍານົດໄວ້. ຊຶ່ງໂປຣແກຣມບັນຊີດັ່ງກ່າວຕ້ອງໄດ້ຜ່ານການທົດສອບການສ້າງບົດລາຍງານຈາກ ກຄສບ ແລະ ພາກສ່ວນກ່ຽວຂ້ອງ ຈຶ່ງຈະອະນຸຍາດໃຫ້ນໍາໃຊ້ໄດ້. ຖ້າຫາກໂປຣແກຣມບັນຊີໃດທີ່ບໍ່ຜ່ານການທົດສອບ ກຄສບ ຈະບໍ່ອະນຸຍາດໃຫ້ນໍາໃຊ້ຢ່າງເດັດຂາດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າກົມ

ພູຂີງ ຈັນທະຈັກ